**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ

ລັດວິສາຫະກິດການບິນລາວ

-----006

ເລກທີ............../ກບລ.

ທີ່ນະຄອນຫຼວງວຽງຈັນ, ວັນທີ 02 AUG 2019

## ລະບຽບກ່ຽວກັບການປະມູນ
## ອາຫານບໍລິການເທິງເຮືອບິນຂອງການບິນລາວ

**ພາກທີ່ I** : ເງື່ອນໄຂລວມ

1. ລັດວິສາຫະກິດການບິນລາວ ມີສໍານັກງານຕັ້ງຢູ່ ບ້ານເມືອງວາທົ່ງ ເມືອງ ສີໂຄດຕະບອງ ນະຄອນຫຼວງວຽງຈັນ ມີຄວາມຍິນ ດີແຈ້ງມາຍັງ ບັນດາບໍລິສັດ ຫຼື ວິສາຫະກິດ ແລະ ຮ້ານຂາຍເຄື່ອງ ທີ່ມີຄວາມສົນໃຈທີ່ຈະເຂົ້າຮ່ວມການແຂ່ງຂັນປະມູນ ຜູ້ສະໜອງອາຫານເພື່ອຮັບໃຊ້ເທິງເຮືອບິນຂອງການບິນລາວ.

2. ບໍລິສັດ ຫຼື ວິສາຫະກິດ, ຫ້າງຮ້ານ ທີ່ສົນໃຈເຂົ້າຮ່ວມການແຂ່ງຂັນປະມູນ ສອບຖາມໄດ້ດ້ວຍຕົນເອງຄື:

- ນະຄອນຫຼວງວຽງຈັນ Tel: (+856 21) 513152

– ວັນທີ **12/08/2019 ເວລາ 09:00** ໂມງ ເປັນມື້ເປີດຊອງປະມູນ ຢູ່ທີ່ຫ້ອງປະຊຸມ ສໍານັກງານໃຫຍ່ ລັດວິສາຫະກິດການບິນລາວ (ສໍານັກງານໃຫຍ່ ລັດວິສາຫະກິດການບິນລາວສະໜາມບິນສາກົນວັດໄຕ ຊັ້ນ 4)

– ໃຫ້ບໍລິສັດ ຫຼື ວິສາຫະກິດ ແລະ ຫ້າງຮ້ານ ທີ່ເຂົ້າຮ່ວມການແຂ່ງຂັນປະມູນ ຖືຊອງປະມູນມາດ້ວຍຕົນເອງ, ພ້ອມທັງແບບຢ່າງ(ອີງໃສ່ເນື້ອໃນເອກະສານເບີ01)ໃຫ້ນໍາມາສະເໜີເພື່ອເປັນແບບຢ່າງໃນວັນເປີດຊອງປະມູນ.

**ພາກທີ່ II : ບົດແນະນໍາສໍາລັບຜູ້ເຂົ້າຮ່ວມປະມູນ.**

1. **ເງື່ອນໄຂ**

- ບໍລິສັດ, ວິສາຫະກິດ ແລະ ຮ້ານ ທີ່ເຂົ້າຮ່ວມປະມູນກ່ຽວກັບ **ອາຫານເທິງເຮືອບິນ (ເບີ 01).**

1 ບໍລິສັດ, ວິສາຫະກິດ ຫຼື ຮ້ານ ທີ່ໄດ້ຂຶ້ນທະບຽນຢ່າງຖືກຕ້ອງຕາມລະບຽບ ແລະ ກົດໝາຍ(ພາຍໃນປະເທດຫຼືຕ່າງປະເທດ).

2 ມີປະຫັວດການເຄື່ອນໄຫວຂອງບໍລິສັດ ຫຼື ຮ້ານອາຫານຢ່າງຕໍ່ເນື່ອງ ແລະ ເຮັດ ທຸລະກິດດ້ານອາຫານຢ່າງໜ້ອຍ 3 ປີຂຶ້ນໄປ.

3 ມີສະຖານທີ່ ທີ່ແນ່ນອນ, ມີອຸປະກອນຄົບຖ້ວນ, ມີຂັ້ນຕອນການຜະລິດຢ່າງຖືກຕ້ອງ. ສະຖານທີການຜະລິດຕ້ອງຮັບປະກັນ ຄວາມສະອາດ ຖືກຕາມຫຼັກອານາໄມ ຂອງສາທາລະນະສຸກ ນະຄອນຫຼວງ ຫຼື ແຂວງ ຖ້າເປັນບໍລິສັດ ຫຼື ຮ້ານອາຫານ ພາຍໃນປະເທດ.

4 ບໍລິສັດ ຫຼື ຮ້ານອາຫານ ທີ່ຈະເຂົ້າຮ່ວມປະມູນ ຕ້ອງມີ ໃບຢັ້ງຢືນ ຂອງ ອົງການອາຫານ ແລະ ຢາ.

5 ພະນັກງານທີ່ເຮັດອາຫານຕົວຈິງ ຕ້ອງມີໃບຢັ້ງຢືນການຝຶກອົບຮົມ ກ່ຽວກັບທາງດ້ານການປຸງແຕ່ງອາຫານ.

6 ສະພາບແວດລ້ອມຂອງໂຮງງານ ຫຼື ສະຖານທີ່ການຜະລິດຕ້ອງຖືກຫຼັກການອານະໄມ ແລະ ສະອາດ.

7 ນໍ້າທີ່ນໍາໃຊ້ໃນການຜະລິດ ຕ້ອງເປັນນໍາທີ່ສະອາດ ທີ່ຖືກຮັບຮອງຈາກ ກະຊວງສາທາລະນະສຸກ ຢ່າງຖືກຕ້ອງ.

8 ຕ້ອງມີທີ່ມາຂອງແຫຼ່ງວັດຖຸດິບ ທີ່ນໍາເຂົ້າຜະລິດຢ່າງຖືກຕ້ອງ ແລະ ມີເອກະສານຢັ້ງຢືນ ຈາກຕົ້ນການຜະລິດວັດຖຸດິບ.

***ໝາຍເຫດ:*** ສ່ວນລາຍລະອຽດ ຂອງອາຫານ ແມ່ນພົວພັນນຳພະແນກ ໂພສະນາການ (021 512041)

**2. ເອກະສານປະມູນ**

1 ໃບສະເໜີເຂົ້າຮ່ວມປະມູນ (ມີຢູ່ໃນຊອງປະມູນ).

2 ໃບອະນຸຍາດດຳເນີນທຸລະກິດ ຫຼື ທະບຽນວິສາຫະກິດ (ສະບັບສຳເນົາ).

3 ໃບທະບຽນອາກອນ ປີ 2018 (ສະບັບສຳເນົາ)

4 ໃບຢັ້ງຢືນຖານະການເງິນ.

5 ໃບປະກາດ ຫຼື ໃບຢັ້ງຢືນ ຂອງວິຊາການ (ສະບັບສຳເນົາ).

6 ໃບປະເມີນລາຄາທີ່ຈ້ຳກາຂອງບໍລິສັດ ຫຼື ວິສາຫະກິດ ທຸກໆໜ້າ

7 ປະຫວັດຜົນງານຜ່ານມາ.

**ໝາຍເຫດ:** ເອກະສານຕ້ອງຈັດລຽງຕາມລຳດັບຂ້າງເທິງນີ້.

**3. ສະກຸນເງິນ**

ການປະເມີນລາຄາ ຕ້ອງເປັນສະກຸນເງິນກີບ.

**4. ການເປີດຊອງປະມູນ**

ຊອງປະມູນແມ່ນບໍລິສັດ, ວິສາຫະກິດ ແລະ ຫ້າງຮ້ານ ເປັນຜູ້ຖືເຂົ້າມາດ້ວຍຕົນເອງ ໃນວັນ ແລະ ເວລາຕາມແຈ້ງການປະມູນ.

5. ການຕັດສິນເອົາຜູ້ຊະນະການປະມູນ

- ຄະນະກຳມະການປະມູນສະຫງວນສິດໃນການປະກາດຜູ້ຊະນະການປະມູນໃນວັນເປີດຊອງປະມູນ.
- ຄະນະກຳມະການປະມູນຈະແຈ້ງຜົນການປະມູນໃຫ້ ຜູ້ຊະນະ ແລະ ຜູ້ບໍ່ຊະນະການປະມູນເປັນລາຍລັກ ອັກສອນ ພາຍໃນ 05 ວັນນັບແຕ່ມື້ເປີດ ຊອງປະມູນເປັນຕົ້ນໄປ.

**6. ເງື່ອນໄຂການເຊັນສັນຍາ.**

a. ພາຍຫຼັງທີ່ຜູ້ຊະນະການປະມູນໄດ້ຮັບແຈ້ງການ ຕ້ອງເຂົ້າມາເຊັນສັນຍານຳເຈົ້າຂອງໂຄງການ ພາຍໃນ 07 ວັນ ຕາມວັນລັດຖະການ.

b. ພາຍຫຼັງເຊັນສັນຍາແລ້ວໃຫ້ນຳເອົາສັນຍາໄປຈົດທະບຽນນຳສຳນັກງານທະບຽນສານ ສ້າງພາຍໃນ 20 ວັນ, ຖ້າກາຍກຳນົດດັ່ງກ່າວຈະຖືກຕັດສິດ ແລະ ຍົກເລີກສັນຍາ. ສ່ວນຄ່າທຳນຽມຜູ້ຊະນະການປະມູນເປັນຜູ້ຮັບຜິດຊອບ.

ຜູ້ອຳນວຍການ

ບຸນມາ ຈັນທະວົງສາ